ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ
ເລກທີ 1870 ກວຕ
ລົງວັນທີ 31 OCT 2013
ເວລາ 1059
ສົ່ງເຖິງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

ລັດຖະບານ

ເລກທີ 289 /ລບ

ນະຄອນຫຼວງວຽງຈັນ, ວັນທີ 28.10.2013

# ດຳລັດ

## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້ ແຜນຍຸດທະສາດການພັດທະນາກິລາ-ກາຍະກຳ ແຕ່ນີ້ເຖິງປີ 2020

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມກົດໝາຍວ່າດ້ວຍການສຶກສາ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 03 ກໍລະກົດ 2007.
- ອີງຕາມກົດໝາຍວ່າດ້ວຍກິລາ-ກາຍະກຳ (ສະບັບປັບປຸງ) 15/ສພຊ, ລົງວັນທີ 06 ກໍລະກົດ 2012.
- ອີງຕາມມະຕິຂອງກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນກໍລະກົດ ສະບັບເລກທີ 08/ລບ, ລົງວັນທີ 15 ສິງຫາ 2013, ຂໍ້ IV.
- ອີງຕາມ ທິດຊີ້ນຳຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ ຕາມທີ່ລະບຸໄວ້ ໃນແຈ້ງການ ຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 419/ຫສພ, ລົງວັນທີ 09 ກັນຍາ 2013.
- ອີງຕາມການສະເໜີ ຂອງລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1491/ສສກ, ລົງວັນທີ 16 ຕຸລາ 2013.

## ລັດຖະບານ ອອກດຳລັດ :

**ມາດຕາ 1.** ຮັບຮອງ ແລະ ປະກາດໃຊ້ "ແຜນຍຸດທະສາດການພັດທະນາກິລາ-ກາຍະກຳ ແຕ່ນີ້ເຖິງປີ 2020"

**ມາດຕາ 2.** ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການ ໃນການປະສານສົມທົບ ກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນຕ່າງໆ ຄົ້ນຄວ້າຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນຍຸດທະສາດການພັດທະນາກິລາ-ກາຍະກຳ ແຫ່ງຊາດ ແຕ່ນີ້ເຖິງປີ 2020 ໃຫ້ໄດ້ຮັບຜົນດີ.

**ມາດຕາ 3.** ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນ ແລະ ພາກສ່ວນອື່ນໆ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4.** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຕາງໜ້າລັດຖະບານ ແຫ່ງ ສປປ ລາວ**

**ນາຍົກລັດຖະມົນຕີ**

ທອງລຶນ ທຳມະວົງ